ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນແມ່ຍິງ ທຫລ ສ້າງຂະບວນການສະເຫຼີມສະຫຼອງ ວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 64 ປີ




ເພື່ອເປັນການສ້າງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 64 ປີ, ໃນວັນທີ 23 ສິງຫາ 2019 ສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີພິທີມອບຮັບເຄື່ອງຊ່ວຍເຫຼືອໃຫ້ແກ່ສະມາຄົມອາສາກູ້ໄພ ນະຄອນຫຼວງວຽງຈັນ (ໜ່ວຍກູ້ໄພ 1624) ທີ່ ບ້ານໂພນພະເນົາ, ນະຄອນຫຼວງວຽງຈັນ. ໂດຍການໃຫ້ກຽດມອບຂອງສະຫາຍນາງ ສາຍສະໝອນ ຈັນທະຈັກ, ຄະນະພັກ ທຫລ, ປະທານສະຫະພັນແມ່ຍິງ ທຫລ, ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາງໜ້າໃຫ້ 3 ອົງການຈັດຕັ້ງມະຫາຊົນ ທຫລ, ສະຫະພັນແມ່ຍິງ 9 ຮາກຖານທີ່ຂຶ້ນກັບສະຫະພັນແມ່ຍິງ ທຫລ ແລະ ໂດຍການຮັບຂອງທ່ານ ພົນຈັດຕະວາ ຄຳຜາຍ ຈັນສີສະໝຸດ ປະທານທີ່ປຶກສາກິດຕິມະສັກສະມາຄົມອາສາກູ້ໄພນະຄອນຫລວງວຽງຈັນ 1624 ແລະ ທ່ານ ລຳເງິນ ວົງພະຈັນ ປະທານສະມາຄົມອາສາກູ້ໄພນະຄອນຫລວງວຽງຈັນ 1624.

ໃນພິທີດັ່ງກ່າວ, ສະຫາຍປະທານສະຫະພັນແມ່ຍິງ ທຫລ ໄດ້ຍົກໃຫ້ເຫັນເຖິງຄວາມສຳຄັນຂອງການປະຕິບັດວຽກງານການຊ່ວຍເຫຼືອທາງດ້ານມະນຸດສະທຳ, ຊຶ່ງ 3 ອົງການຈັດຕັ້ງມະຫາຊົນ ທຫລ ຈຶ່ງໄດ້ພ້ອມກັນນຳເອົາວັດຖຸປັດໃຈມາມອບ ແລະ ກໍ່ເພື່ອເປັນການປະກອບສ່ວນ ສ້າງຂະບວນການສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 64 ປີ ແລະ ເປັນການຊ່ວຍເຫຼືອສັງຄົມ ໂດຍໄດ້ທ້ອນໂຮມເງິນບໍລິຈາກຈາກພະນັກງານທັງໝົດ ຊື້ອຸປະກອນຮັບໃຊ້ທາງການແພດທີ່ຈຳເປັນໃນການຊ່ວຍເຫຼືອປະຖົມພະຍາບານຄົນເຈັບສຸກເສີນ ເປັນມູນຄ່າ 19,280,000 ກີບ ແລະ ເງິນສົດ 3,000,000 ກີບ ມອບໃຫ້ສະມາຄົມອາສາກູ້ໄພນະຄອນຫລວງວຽງຈັນ 1624 ນຳໄປຮັບໃຊ້ໃນການປະຕິບັດໜ້າທີ່ຂອງຕົນ".




ໃນໄລຍະຜ່ານມາສະຫະພັນແມ່ຍິງ ທຫລ ກໍ່ຄື 3 ອົງການຈັດຕັ້ງມະຫາຊົນ ທຫລ ໄດ້ເຄື່ອນໄຫວຂະບວນການຊ່ວຍເຫຼືອທາງສັງຄົມເປັນປະຈຳທຸກປີ ໂດຍຜ່ານມາກໍ່ໄດ້ມອບເຄື່ອງຊ່ວຍເຫຼືອໃຫ້ແກ່ໜ່ວຍກູ້ໄພ 1623, ສູນສົງເຄາະນະຄອນຫຼວງວຽງຈັນ ແລະ ອື່ນໆ. ນອກຈາກນີ້, ໃນລະຫວ່າງວັນທີ 23-31 ກໍລະກົດ 2019 ສະຫະພັນແມ່ຍິງ ທຫລ ກໍ່ໄດ້ຈັດຕັ້ງເຄື່ອນໄຫວຂະບວນການຢ້ຽມຢາມອວຍພອນພະນັກງານການນຳ-ບຳນານ ເພດຍິງຂອງ ທຫລ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 64 ປີ ອີກດ້ວຍ.

**# ຂ່າວ-ພາບ: ວັນປະເສີດ ສິມບູນຂັນ.**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**